**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ອົງການໄອຍະການປະຊາຊົນສູງສຸດ
ກະຊວງປ້ອງກັນປະເທດ
ກະຊວງປ້ອງກັນຄວາມສະຫງົບ

ເລກທີ.014../ອອປສ,ປກທ,ປກສ
ນະຄອນຫຼວງວຽງຈັນ, ວັນທີ...9 ກັນຍາ 2019...

# ຄຳແນະນຳຮ່ວມ

## ລະຫວ່າງ

## ອົງການໄອຍະການປະຊາຊົນສູງສຸດ, ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ

**ເຖິງ: ອົງການໄອຍະການປະຊາຊົນ, ອົງການໄອຍະການທະຫານ, ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ທະຫານ ແລະ ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດ ໃນຂອບເຂດທົ່ວປະເທດ.**

**ເລື່ອງ: ການແບ່ງຂອບເຂດສິດ ແລະ ໜ້າທີ່ ໃນການດຳເນີນຄະດີອາຍາ.**

- ອີງຕາມ ມາດຕາ 77 ແລະ ມາດຕາ 83 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ (ສະບັບປັບປຸງ ປີ 2017) ສະບັບເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017;
- ອີງຕາມ ມາດຕາ 3 ຂອງກົດໝາຍວ່າດ້ວຍອົງການໄອຍະການທະຫານ ສະບັບເລກທີ 37/ສພຊ, ລົງວັນທີ 16 ທັນວາ 2013;
- ອີງຕາມ ບົດບັນທຶກຮ່ວມ 04 ພາກສ່ວນ ກ່ຽວກັບການດຳເນີນຄະດີອາຍາ ຕາມຂະບວນການຍຸຕິທຳ ຄັ້ງທີ V ສະບັບລົງວັນທີ 06 ທັນວາ 2017.

ໃນໄລຍະຜ່ານມາເຫັນວ່າ ການແບ່ງຂອບເຂດສິດ ແລະ ໜ້າທີ່ ໃນການດຳເນີນຄະດີອາຍາ ຂອງອົງການໄອຍະການປະຊາຊົນ, ອົງການໄອຍະການທະຫານ, ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ທະຫານ, ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດ ຕາມມາດຕາ 77 ແລະ ມາດຕາ 83 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2017 ແລະ ມາດຕາ 03 ຂອງກົດໝາຍວ່າດ້ວຍອົງການໄອຍະການທະຫານ ຍັງບໍ່ມີຄວາມເປັນເອກະພາບກັນທາງດ້ານຂອບເຂດສິດ ແລະ ໜ້າທີ່ ໃນການດຳເນີນຄະດີອາຍາ.

ສະນັ້ນ, ເພື່ອເປັນບ່ອນອີງໃຫ້ແກ່ການນຳໃຊ້ ສິດ ແລະ ໜ້າທີ່ ໃນການດຳເນີນຄະດີອາຍາ ຂອງແຕ່ລະພາກສ່ວນໃຫ້ ຖືກຕ້ອງ, ສອດຄ່ອງຕາມກົດໝາຍ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

ອົງການໄອຍະການປະຊາຊົນສູງສຸດ, ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ອອກຄຳແນະນຳຮ່ວມ ດັ່ງນີ້:

1. ຈຸດປະສົງ:

- ເພື່ອຮັບປະກັນການຈັດຕັ້ງປະຕິບັດ ຂອບເຂດສິດ ແລະ ໜ້າທີ່ ໃນການດຳເນີນຄະດີອາຍາ ຕາມມາດຕາ 77 ແລະ ມາດຕາ 83 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2017 ແລະ ມາດຕາ 03 ຂອງກົດໝາຍ ວ່າດ້ວຍອົງການໄອຍະການທະຫານທີ່ໄດ້ກຳນົດໄວ້;

- ເພື່ອສ້າງກົນໄກປະສານສົມທົບ ລະຫວ່າງ ອົງການໄອຍະການປະຊາຊົນ, ອົງການໄອຍະການທະຫານ, ອົງການສືບສວນ-ສອບສວນຂອງເຈົ້າທີ່ທະຫານ ແລະ ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດ ໃຫ້ມີຄວາມເປັນເອກະພາບ, ກົມກຽວ ແລະ ຊຸກຍູ້ເຊິ່ງກັນ ແລະ ກັນ ໃນການປະຕິບັດສິດ ແລະ ໜ້າທີ່ຂອງໃຜລາວ;

- ເພື່ອເປັນການຍົກສູງຄວາມຮັບຜິດຊອບຂອງພະນັກງານແຕ່ລະພາກສ່ວນ ໃນການນຳໃຊ້ສິດ ແລະ ໜ້າທີ່ ໃຫ້ມີຄວາມເປັນເອກະພາບ, ໂປ່ງໃສ ແລະ ສາມາດກວດສອບໄດ້.

2. ຂອບເຂດສິດ ແລະ ໜ້າທີ່ໃນການດຳເນີນກົດໝາຍອາຍາ

- ການກະທຳຜິດທາງອາຍາ ຂອງນາຍ, ພົນທະຫານ, ກຳມະກອນ ແລະ ພາລະກອນ ປ້ອງກັນຊາດ ທີ່ໄດ້ກຳນົດໄວ້ໃນມາດຕາ 77 ແລະ ມາດຕາ 83 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2017 ແມ່ນມອບໃຫ້ອົງການສືບສວນ-ສອບສວນເຈົ້າໜ້າທີ່ທະຫານເປັນຜູ້ດຳເນີນຄະດີ ຕາມມາດຕາ 03 ຂອງກົດໝາຍວ່າດ້ວຍອົງການໄອຍະການທະຫານ;

- ການກະທຳຜິດທາງອາຍາຂອງນາຍ, ພົນທະຫານ, ກຳມະກອນ ແລະ ພາລະກອນປ້ອງກັນຊາດ ກ່ຽວກັບຢາເສບຕິດ, ໃນກໍລະນີ ເຈົ້າໜ້າທີ່ຕຳຫຼວດຈັບຕົວ ໃຫ້ປະສານສົມທົບກັບ ອົງການສືບສວນ-ສອບສວນເຈົ້າໜ້າທີ່ທະຫານ ເຂົ້າຮ່ວມໃນການດຳເນີນຄະດີພາຍຫຼັງການດຳເນີນຄະດີສິ້ນສຸດແລ້ວ ໃຫ້ສົ່ງສຳນວນຄະດີ ພ້ອມດ້ວຍຂອງກາງ ໃຫ້ອົງການໄອຍະການທະຫານພາກ ພາຍໃນເວລາ 3 ວັນ ຕາມມາດຕາ 150 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ (ສະບັບປັບປຸງ ປີ 2017) ເພື່ອພິຈາລະນາ ຖະແຫຼງ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານທະຫານພາກຕັດສິນລົງໂທດຕາມກົດໝາຍ; ພາຍຫຼັງສານຕັດສິນແລ້ວ ສານທະຫານພາກຕ້ອງສົ່ງຄຳຕັດສິນ ໃຫ້ເຈົ້າໜ້າທີ່ຕຳຫຼວດ ທີ່ດຳເນີນຄະດີເບື້ອງຕົ້ນເພື່ອຊາບ;

- ການດຳເນີນຄະດີອາຍາຂອງນາຍ, ພົນທະຫານ, ກຳມະກອນ ແລະ ພາລະກອນ ປ້ອງກັນຊາດ ກ່ຽວກັບການລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸປະຕິເຫດ ມອບໃຫ້ເຈົ້າໜ້າທີ່ຕຳຫຼວດຈະລາຈອນ ເປັນຜູ້ດຳເນີນຄະດີ ເຫັນວ່າຄົບອົງປະກອບຂອງການກະທຳຜິດທາງອາຍາ ໃຫ້ເຈົ້າໜ້າທີ່ຕຳຫຼວດຈະລາຈອນ ສະຫຼຸບສຳນວນຄະດີແລ້ວ ສົ່ງໃຫ້ໄອຍະການທະຫານພາກ ພາຍໃນເວລາ 03 ວັນ ຕາມມາດຕາ 150 ຂອງກົດໝາຍວ່າດ້ວຍການດຳນີນຄະດີອາຍາ (ສະບັບປັບປຸງ ປີ 2017) ເພື່ອສັ່ງຟ້ອງໃຫ້ສານທະຫານພາກ ພິຈາລະນາຕັດສິນລົງໂທດຕາມກົດໝາຍພາຍຫຼັງສານຕັດສິນແລ້ວ ສານທະຫານພາກຕ້ອງສົ່ງຄຳຕັດສິນໃຫ້ເຈົ້າໜ້າທີ່ຕຳຫຼວດຈະລາຈອນທີ່ດຳເນີນຄະດີເບື້ອງຕົ້ນ ເພື່ອຊາບ.

- ກໍລະນີກະທຳຜິດຮ່ວມກັນ ລະຫວ່າງ ນາຍ, ພົນທະຫານ, ກຳມະກອນ ແລະ ພາລະກອນ ປ້ອງກັນຊາດກັບນາຍ ແລະ ພົນຕຳຫຼວດ, ພະນັກງານ, ລັດຖະກອນ ແລະ ປະຊາຊົນໃຫ້ເຈົ້າໜ້າທີ່ຕຳຫຼວດສືບສວນ-ສອບສວນ, ອົງການສືບສວນ-ສອບສວນເຈົ້າໜ້າທີ່ທະຫານ, ອົງການໄອຍະການປະຊາຊົນ ແລະ ອົງການໄອຍະການທະຫານ

ບ່ອນການກະທຳຜິດເກີດຂຶ້ນ ປະສານສົມທົບ ດຳເນີນຄະດີຮ່ວມກັນ; ພາຍຫຼັງດຳເນີນການສືບສວນ-ສອບສວນ ສຳເລັດແລ້ວ ຈຶ່ງໃຫ້ແຍກສຳນວນຄະດີ ສົ່ງໃຫ້ອົງການໄອຍະການປະຊາຊົນ ຫຼື ອົງການໄອຍະການທະຫານ ພິຈາລະນາຕາມພາລະບົດບາດທີ່ກົດໝາຍໄດ້ກຳນົດໄວ້.

- ກໍລະນີເຈົ້າໜ້າທີ່ຕຳຫຼວດສືບສວນ-ສອບສວນ ກັກຕົວ, ຈັບຕົວ ນາຍ, ພົນທະຫານ, ກຳມະກອນ ແລະ ພາລະກອນ ປ້ອງກັນຊາດ ຕ້ອງຂໍຄຳສັ່ງຈາກຫົວໜ້າອົງການສືບສວນ-ສອບສວນເຈົ້າໜ້າທີ່ທະຫານ ຫຼື ຫົວໜ້າອົງການໄອຍະການທະຫານ ທີ່ກ່ຽວຂ້ອງ, ຍົກເວັ້ນກໍລະນີເຊິ່ງໜ້າ ແລະ ຮີບດ່ວນ ໃຫ້ລາຍງານຫົວໜ້າອົງການໄອຍະການທະຫານ ຊາບ ພາຍໃນເວລາ 24 ຊົ່ວໂມງ ຕາມມາດຕາ 138, 139, 140 ຂອງກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາ (ສະບັບປັບປຸງປີ 2017).

### 3. ມາດຕະການຈັດຕັ້ງປະຕິບັດ

ຢູ່ຂັ້ນສູນກາງ ມອບໃຫ້ກົມຕິດຕາມກວດກາການດຳເນີນຄະດີອາຍາ ອົງການໄອຍະການປະຊາຊົນສູງສຸດ, ອົງການໄອຍະການທະຫານຂັ້ນສູງ, ກົມໃຫຍ່ສັນຕິບານ, ກົມໃຫຍ່ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ ແລະ ຢູ່ຂັ້ນທ້ອງຖິ່ນມອບໃຫ້ ອົງການໄອຍະການປະຊາຊົນ, ອົງການໄອຍະການທະຫານພາກ, ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນ ແຂວງ, ເຜີຍແຜ່ ເຊື່ອມຊຶມ, ຈັດຕັ້ງປະຕິບັດ ຄຳແນະນຳຮ່ວມສະບັບນີ້ ຢ່າງເຂັ້ມງວດ ພ້ອມທັງຕິດຕາມຊຸກຍູ້ໃນການຈັດຕັ້ງຜັນຂະຫຍາຍ, ສະຫຼຸບ ຖອດຖອນບົດຮຽນ ແລະ ລາຍງານສ່ອງແສງຕໍ່ຄະນະນຳຂັ້ນຂອງຕົນເປັນປົກກະຕິ.

ຄຳແນະນຳຮ່ວມສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

| ລັດຖະມົນຕີ | ລັດຖະມົນຕີ | ຫົວໜ້າ |
|---|---|---|
| ກະຊວງປ້ອງກັນຄວາມສະຫງົບ | ກະຊວງປ້ອງກັນປະເທດ | ອົງການໄອຍະການປະຊາຊົນສູງສຸດ |